ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທຄຕລ BCEL **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0575 /ທຄຕລ..2026.........

ນະຄອນຫຼວງວຽງຈັນ, ວັນທີ:......08 JUL 2026......

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ບໍລິສັດຜູ້ສະໜອງ ແລະ ຫ້າງຮ້ານຈຳໜ່າຍເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໄອທີ .

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄານ້ຳມຶກ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການນ້ຳມຶກ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

- **ລາຄານ້ຳມຶກຢູ່ລະດັບ Grade A (ຍີ່ຫໍ້ Lasuprint ຫຼື Asta )**

| ລ/ດ | ລາຍການ | ຈຳນວນ | ຍີ່ຫໍ້ | ສະເລ່ຍການນຳໃຊ້ເດືອນ/ກ່ອງ |
|---|---|---|---|---|
| 1 | Toner Replacement Ribbon | 1 | Olivetti | 50 |
| 2 | Toner HP Laserjet 30 X | 1 | Lasuprint ຫຼື Asta ( Grade A ) | 50 |
| 3 | Drum CF232A | 1 | | 10 |
| 4 | Toner HP 17A-CF217A | 1 | | 1 |
| 5 | Toner HP 145A W1450A | 1 | | 3 |
| 6 | Toner HP 151A-W1510A BK | 1 | | 3 |
| 7 | Toner Brother TN 263/267 BK | 1 | | 5 |
| | Toner Brother TN 263/267 C | 1 | | 3 |
| | Toner Brother TN 263/267 M | 1 | | 3 |
| | Toner Brother TN 263/267 Y | 1 | | 3 |
| 8 | Toner Brother TN 269 BK | 1 | | 2 |
| | Toner Brother TN 269 C | 1 | | 2 |
| | Toner Brother TN 269 M | 1 | | 2 |
| | Toner Brother TN 269 Y | 1 | | 2 |
| 9 | Toner Cartridge canon 054 BK | 1 | | 2 |
| | Toner Cartridge canon 054 C | 1 | | 2 |
| | Toner Cartridge canon 054 M | 1 | | 2 |
| | Toner Cartridge canon 054 Y | 1 | | 2 |

- **ເອກະສານ ຊອງທີ 1:**

1.1 ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ ດຳເນີນທຸລະກິດ 01 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023,2024,2025.

1.2 ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.

1.3 ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນຄານ ວັນທີ 13/07/2026 ເວລາ 11:00 ໂມງ ໂດຍສົ່ງຟາຍເຂົ້າ E-mail: procurement@bcel.com.la .

- **ເອກະສານຊອງທີ 2 (ປິດຊອງ)**:

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **28/07/2026 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄໍ້າປະກັນທີ່ອອກ ໂດຍ ທຄຕລ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/09/2026) ຫຼື ແຊັກທີ່ວີຊ້າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສໍາລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສົ່ງສິນຄ້າໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄໍ້າປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊໍາລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ແຕ່ລະງວດ/ເດືອນ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນ ມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮອງ ຜູ້ອໍານວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ມັນທະລາດ ແກ້ວປະເສີດ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:
021 213200 ຕໍ່ 414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………./ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ປະເທດ……. | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: